# ຮ່າງກົດໝາຍສະແດງສິດທິການດູແລເບິ່ງແຍງຢູ່ເຮືອນໃນ Minnesota ສໍາລັບລູກຄ້າຂອງຜູ້ໃຫ້ບໍລິການດູແລເບິ່ງແຍງຢູ່ເຮືອນທີ່ມີໃບອະນຸຍາດເທົ່ານັ້ນ

## ຄໍາຖະແຫຼງສິດທິ

ລູກຄ້າຜູ້ທີ່ໄດ້ຮັບການບໍລິການດູແລເບິ່ງແຍງຢູ່ເຮືອນໃນຊຸມຊົນມີສິດທິເຫຼົ່ານີ້:

1. ໄດ້ຮັບຂໍ້ມູນເປັນລາຍລັກອັກສອນ ໂດຍການໃຊ້ຖ້ອຍຄໍາທໍາມະດາ ກ່ຽວກັບສິດທິກ່ອນທີ່ຈະໄດ້ຮັບການບໍລິການ ເຊິ່ງລວມເຖິງສິ່ງທີ່ຕ້ອງເຮັດ ຖ້າມີການລະເມີດສິດທິ.
2. ຮັບການດູແລເບິ່ງແຍງ ແລະ ການບໍລິການຕາມແຜນທີ່ເໝາະສົມ ແລະ ໃໝ່ຫຼ້າສຸດ ແລະ ຢູ່ພາຍໃຕ້ມາດຕະຖານການດູແລເບິ່ງແຍງສຸຂະພາບ, ທາງການແພດ ຫຼື ການພະຍາບານທີ່ມີການຍອມຮັບ ແລະ ການດູແລເບິ່ງແຍງແບບເອົາຄົນເຈັບເປັນສູນກາງ ເພື່ອມີສ່ວນຮ່ວມໃນການພັດທະນາ, ການປັບປຸງແກ້ໄຂ ແລະ ການປະເມີນແຜນ ແລະ ການບໍລິການ.
3. ໄດ້ຮັບການແຈ້ງບອກກ່ອນທີ່ຈະໄດ້ຮັບການບໍລິການກ່ຽວກັບປະເພດ ແລະ ສາຂາວິຊາຂອງພະນັກງານຜູ້ທີ່ຈະໃຫ້ການບໍລິການ, ຄວາມຖີ່ໃນການເຂົ້າຢ້ຽມທີ່ສະເໜີໃຫ້ໄດ້ຮັບ, ທາງເລືອກອື່ນໆທີ່ມີໃຫ້ສໍາລັບການຕອບສະໜອງຄວາມຕ້ອງການໃນການດູແລເບິ່ງແຍງຢູ່ເຮືອນ ແລະ ຜົນຕາມມາທີ່ອາດເກີດຂຶ້ນຈາກການປະຕິເສດການບໍລິການເຫຼົ່ານີ້.
4. ໄດ້ຮັບແຈ້ງບອກກ່ອນລ່ວງໜ້າກ່ຽວກັບການປ່ຽນແປງໃດໜຶ່ງທີ່ແນະນໍາໂດຍຜູ້ໃຫ້ບໍລິການໃນແຜນການບໍລິການ ແລະ ມີສ່ວນຮ່ວມໃນການຕັດສິນໃຈກ່ຽວກັບການປ່ຽນແປງຕໍ່ແຜນການບໍລິການ.
5. ປະຕິເສດການບໍລິການ ຫຼື ການປິ່ນປົວ.
6. ຮູ້ຈັກຂໍ້ຈໍາກັດໃດໜຶ່ງຕໍ່ການບໍລິການທີ່ມີໃຫ້ຈາກຜູ້ໃຫ້ບໍລິການດູແລເບິ່ງແຍງຢູ່ເຮືອນ ກ່ອນທີ່ຈະໄດ້ຮັບການບໍລິການ ຫຼື ໃນລະຫວ່າງການເຂົ້າຢ້ຽມເບື້ອງຕົ້ນ.
7. ໄດ້ຮັບແຈ້ງບອກກ່ອນເລີ່ມໃຫ້ການບໍລິການ ວ່າຜູ້ໃຫ້ບໍລິການເກັບຄ່າບໍລິການຫຍັງແດ່; ອາດຈະມີການຄາດຫວັງການຊໍາລະເງິນໃນຂອບເຂດຫຍັງແດ່ຈາກປະກັນສຸຂະພາບ, ໂຄງການຕ່າງໆຂອງລັດ ຫຼື ແຫຼ່ງອື່ນໆ ຖ້າຮູ້ຈັກ; ແລະ ຄ່າຫຍັງແດ່ທີ່ລູກຄ້າອາດຈະມີຄວາມຮັບຜິດຊອບຕ້ອງຈ່າຍ.
8. ຮູ້ວ່າອາດຈະມີການບໍລິການອື່ນໆໃຫ້ໃນຊຸມຊົນ ເຊິ່ງລວມເຖິງການບໍລິການ ແລະ ຜູ້ໃຫ້ບໍລິການດູແລເບິ່ງແຍງຢູ່ເຮືອນອື່ນໆ ແລະ ຮູ້ວ່າຊອກຫາຂໍ້ມູນກ່ຽວກັບການບໍລິການເຫຼົ່ານີ້ຢູ່ໃສ.
9. ເລືອກຜູ້ໃຫ້ບໍລິການທີ່ມີໃຫ້ໄດ້ຢ່າງອິດສະຫຼະ ແລະ ປ່ຽນຜູ້ໃຫ້ບໍລິການຫຼັງຈາກໄດ້ເລີ່ມການບໍລິການແລ້ວ ພາຍໃນຂໍ້ຈໍາກັດປະກັນສຸຂະພາບ, ປະກັນໄພດູແລເບິ່ງແຍງໄລຍະຍາວ, ໂຄງການຊ່ວຍເຫຼືອທາງການແພດ, ໂຄງການສຸຂະພາບອື່ນໆ ຫຼື ໂຄງການຕ່າງໆຂອງລັດ.
10. ເກັບຂໍ້ມູນສ່ວນບຸກຄົນ, ທາງການເງິນ ແລະ ທາງການແພດໄວ້ເປັນສ່ວນຕົວ ແລະ ໄດ້ຮັບຄໍາແນະນໍາກ່ຽວກັບນະໂຍບາຍ ແລະ ຂັ້ນຕອນຂອງຜູ້ໃຫ້ບໍລິການກ່ຽວກັບການເປີດເຜີຍຂໍ້ມູນດັ່ງກ່າວ.
11. ເຂົ້າເຖິງບັນທຶກຂອງລູກຄ້າເອງ ແລະ ຂໍ້ມູນເປັນລາຍລັກອັກສອນຈາກບັນທຶກເຫຼົ່ານັ້ນຕາມກົດໝາຍວ່າດ້ວຍບັນທຶກສຸຂະພາບ Minnesota, ກົດໝາຍ Minnesota, ມາດຕາ 144.291 ຫາ 144.298.
12. ໄດ້ຮັບການບໍລິການຈາກຄົນຜູ້ທີ່ຜ່ານການຝຶກອົບຮົມຢ່າງເໝາະສົມ ແລະ ມີຄວາມຊໍານານໃນການປະຕິບັດໜ້າທີ່ຂອງເຂົາເຈົ້າ.
13. ໄດ້ຮັບການປະຕິບັດຕໍ່ດ້ວຍຄວາມສຸພາບ ແລະ ຄວາມເຄົາລົບ ແລະ ປະຕິບັດຕໍ່ຊັບສິນຂອງລູກຄ້າດ້ວຍຄວາມເຄົາລົບ.
14. ພົ້ນຈາກການທາລຸນທາງຮ່າງກາຍ ແລະ ທາງວາຈາ, ການປ່ອຍປະລະເລີຍ, ການສະແຫວງຫາຜົນປະໂຫຍດທາງການເງິນ ແລະ ການທາລຸນທຸກຮູບແບບທີ່ໄດ້ຮັບຄວາມຄຸ້ມຄອງພາຍໃຕ້ກົດໝາຍວ່າດ້ວຍຜູ້ໃຫຍ່ທີ່ອ່ອນແອ ແລະ ກົດໝາຍວ່າດ້ວຍການທາລຸນເຍົາວະຊົນ.
15. ແຈ້ງການກ່ອນລ່ວງໜ້າຢ່າງເໝາະສົມກ່ຽວກັບການປ່ຽນແປງໃນການບໍລິການ ຫຼື ຄ່າບໍລິການ.

16. ຮູ້ຈັກສາເຫດຂອງຜູ້ໃຫ້ບໍລິການສໍາລັບການຢຸດເຊົາການບໍລິການ.

17. ແຈ້ງການກ່ອນລ່ວງໜ້າຢ່າງໜ້ອຍສິບມື້ຕາມປະຕິທິນ ກ່ຽວກັບການຢຸດເຊົາການບໍລິການໂດຍຜູ້ໃຫ້ບໍລິການດູແລເບິ່ງແຍງຢູ່ເຮືອນ. ຂໍ້ນີ້ບໍ່ໄດ້ນໍາໃຊ້ໃນກໍລະນີທີ່ວ່າ:

- ລູກຄ້າມີສ່ວນພົວພັນໃນການດໍາເນີນການທີ່ປ່ຽນແປງຂໍ້ກໍານົດຂອງແຜນການບໍລິການກັບຜູ້ໃຫ້ບໍລິການດູແລເບິ່ງແຍງຢູ່ເຮືອນຢ່າງຫຼວງຫຼາຍ;
- ລູກຄ້າ, ບຸກຄົນຜູ້ທີ່ອາໄສຢູ່ກັບລູກຄ້າ ຫຼື ຄົນອື່ນໆສ້າງສະພາບແວດລ້ອມການເຮັດວຽກທີ່ເປັນການທາລຸນ ຫຼື ບໍ່ປອດໄພສໍາລັບບຸກຄົນທີ່ໃຫ້ການບໍລິການດູແລເບິ່ງແຍງຢູ່ເຮືອນ; ຫຼື
- ເຫດສຸກເສີນ ຫຼື ການປ່ຽນແປງຢ່າງຫຼວງຫຼາຍໃນເງື່ອນໄຂຂອງລູກຄ້າໄດ້ສົ່ງຜົນໃຫ້ມີຄວາມຕ້ອງການບໍລິການທີ່ເກີນແຜນການບໍລິການປັດຈຸບັນ ແລະ ທີ່ຜູ້ໃຫ້ບໍລິການດູແລເບິ່ງແຍງຢູ່ເຮືອນບໍ່ສາມາດຕອບສະໜອງໄດ້ຢ່າງປອດໄພ.

18. ການໂອນຍ້າຍແບບມີການປະສານເມື່ອຈະມີການປ່ຽນແປງຜູ້ໃຫ້ບໍລິການ.

19. ການຮ້ອງຮຽນຕໍ່ພະນັກງານ ແລະ ຄົນອື່ນໃນທາງເລືອກຂອງລູກຄ້າກ່ຽວກັບການບໍລິການທີ່ສະໜອງໃຫ້ ຫຼື ບໍ່ສາມາດສະໜອງໃຫ້ ແລະ ການຂາດຄວາມສຸພາບ ຫຼື ຄວາມເຄົາລົບຕໍ່ລູກຄ້າ ຫຼື ຊັບສິນຂອງລູກຄ້າ ແລະ ສິດທິແນະນໍາການປ່ຽນແປງໃນນະໂຍບາຍ ແລະ ການບໍລິການ ໂດຍປາສະຈາກການແກ້ແຄ້ນ ລວມເຖິງການຂູ່ການຢຸດເຊົາການບໍລິການ.

20. ຮູ້ຈັກວິທີຕິດຕໍ່ບຸກຄົນທີ່ກ່ຽວຂ້ອງກັບຜູ້ໃຫ້ບໍລິການດູແລເບິ່ງແຍງຢູ່ເຮືອນ ຜູ້ທີ່ມີຄວາມຮັບຜິດຊອບສໍາລັບການຈັດການບັນຫາ ແລະ ໃຫ້ຜູ້ໃຫ້ບໍລິການດູແລເບິ່ງແຍງຢູ່ເຮືອນກວດສອບ ແລະ ພະຍາຍາມແກ້ໄຂຄໍາຮ້ອງທຸກ ຫຼື ຄໍາຮ້ອງຮຽນ.

21. ຮູ້ຈັກຊື່ ແລະ ທີ່ຢູ່ຂອງໜ່ວຍງານລັດ ຫຼື ເຂດປົກຄອງ ເພື່ອຕິດຕໍ່ຂໍຂໍ້ມູນ ຫຼື ຄວາມຊ່ວຍເຫຼືອເພີ່ມເຕີມ.

22. ຢືນຢັນໃຊ້ສິດທິເຫຼົ່ານີ້ເປັນການສ່ວນຕົວ ຫຼື ໃຫ້ຜູ້ຕາງໜ້າຂອງລູກຄ້າ ຫຼື ໃຜກໍຕາມໃນນາມຂອງລູກຄ້າຢືນຢັນໃຊ້ພວກມັນ ໂດຍບໍ່ມີການແກ້ແຄ້ນ.

23. ວາງອຸປະກອນກວດຕິດຕາມອີເລັກໂທຣນິກໃສ່ໃນພື້ນທີ່ຂອງລູກຄ້າ ຫຼື ຜູ້ຢູ່ອາໄສຕາມຂໍ້ກໍານົດຂອງລັດ.

ທ່ານອາດຈະເລືອກປຶກສາບັນຫາກັງວົນໃຈໃດໜຶ່ງກັບຜູ້ໃຫ້ບໍລິການຂອງທ່ານ. ຕາມການເຕືອນ, ຜູ້ໃຫ້ບໍລິການຈໍາເປັນຕ້ອງເຮັດວຽກເພື່ອຮັບປະກັນວ່າສິດທິຂອງທ່ານ ແລະ ຂໍ້ກໍານົດອື່ນໆໄດ້ຖືກປະຕິບັດຕາມ. ເມື່ອຜູ້ໃຫ້ບໍລິການລະເມີດສິດທິໃນມາດຕານີ້, ເຂົາເຈົ້າຕ້ອງໄດ້ຖືກປັບໄໝ ແລະ ດໍາເນີນການຕາມໃບອະນຸຍາດ.

ຜູ້ໃຫ້ບໍລິການຕ້ອງເຮັດດັ່ງຕໍ່ໄປນີ້:

- ສົ່ງເສີມ ແລະ ຊ່ວຍເຫຼືອໃນການໃຊ້ສິດທິເຫຼົ່ານີ້ທີ່ເປັນໄປໄດ້ຢ່າງເຕັມທີ່.
- ໃຫ້ຊື່ ແລະ ເບີໂທລະສັບຂອງບຸກຄົນ ແລະ ອົງການຈັດຕັ້ງທີ່ໃຫ້ການສະໜັບສະໜູນ ແລະ ການບໍລິການດ້ານກົດໝາຍສໍາລັບລູກຄ້າ ແລະ ຜູ້ຢູ່ອາໄສທີ່ຕ້ອງການຢືນຢັນໃຊ້ສິດທິຂອງເຂົາເຈົ້າ.
- ໃຊ້ຄວາມພະຍາຍາມທຸກວິທີທາງເພື່ອຊ່ວຍເຫຼືອລູກຄ້າ ຫຼື ຜູ້ຢູ່ອາໄສໃນການຮັບເອົາຂໍ້ມູນກ່ຽວກັບວ່າ Medicare, ໂຄງການຊ່ວຍເຫຼືອທາງການແພດ, ໂຄງການສຸຂະພາບອື່ນໆ ຫຼື ໂຄງການຕ່າງໆຂອງລັດຈະຈ່າຍຄ່າບໍລິການຫຼືບໍ່.
- ອໍານວຍຄວາມສະດວກຢ່າງເໝາະສົມສໍາລັບຄົນຜູ້ທີ່ມີຄວາມບົກຜ່ອງໃນການສື່ສານ ຫຼື ບັນດາຜູ້ທີ່ເວົ້າພາສາອື່ນນອກເໜືອຈາກພາສາອັງກິດ.

- ໃຫ້ຂໍ້ມູນ ແລະ ແຈ້ງການທັງໝົດໂດຍການໃຊ້ຖ້ອຍຄໍາທໍາມະດາ ແລະ ໃນຄໍາສັບທີ່ລູກຄ້າ ຫຼື ຜູ້ຢູ່ອາໄສສາມາດເຂົ້າໃຈ.

ບໍ່ມີຜູ້ໃຫ້ບໍລິການຄົນໃດອາດຮຽກຮ້ອງ ຫຼື ຮ້ອງຂໍໃຫ້ລູກຄ້າ ຫຼື ຜູ້ຢູ່ອາໄສສະຫຼະສິດທິໃດໆທີ່ລະບຸໄວ້ໃນມາດຕານີ້ໄດ້ທຸກເວລາ ຫຼື ດ້ວຍເຫດຜົນໃດໆ, ເຊິ່ງລວມເຖິງຕາມເງື່ອນໄຂຂອງການເລີ່ມໃຫ້ການບໍລິການ ຫຼື ການເຂົ້າເຮັດສັນຍາຢູ່ອາໄສແບບມີການຊ່ວຍເຫຼືອ.

## ການຕີຄວາມໝາຍ ແລະ ການບັງຄັບໃຊ້ສິດທິ

ສິດທິເຫຼົ່ານີ້ຈັດຕັ້ງຂຶ້ນເພື່ອສິດທິປະໂຫຍດຂອງລູກຄ້າຜູ້ທີ່ໄດ້ຮັບການບໍລິການດູແລເບິ່ງແຍງຢູ່ເຮືອນ. ຜູ້ໃຫ້ບໍລິການດູແລເບິ່ງແຍງຢູ່ເຮືອນທຸກຄົນຕ້ອງປະຕິບັດຕາມສິດທິເຫຼົ່ານີ້. ຜູ້ບັນຊາການຈະຕ້ອງບັງຄັບໃຊ້ສິ່ງນີ້. ຜູ້ໃຫ້ບໍລິການດູແລເບິ່ງແຍງຢູ່ເຮືອນອາດຈະບໍ່ຮ້ອງຂໍ ຫຼື ຮຽກຮ້ອງໃຫ້ລູກຄ້າສະຫຼະສິດທິໃດໆເຫຼົ່ານີ້ຕາມເງື່ອນໄຂຂອງການໄດ້ຮັບການບໍລິການ. ຄໍາຖະແຫຼງສິດທິນີ້ບໍ່ປ່ຽນແທນ ຫຼື ຫຼຸດສິດທິ ແລະ ອິດສະຫຼະພາບອື່ນໆທີ່ອາດຈະມີຢູ່ທີ່ກ່ຽວຂ້ອງກັບລູກຄ້າທີ່ໄດ້ຮັບການບໍລິການດູແລເບິ່ງແຍງຢູ່ເຮືອນ, ຄົນທີ່ໃຫ້ການບໍລິການດູແລເບິ່ງແຍງຢູ່ເຮືອນ ຫຼື ຜູ້ໃຫ້ບໍລິການດູແລເບິ່ງແຍງຢູ່ເຮືອນທີ່ມີໃບອະນຸຍາດ.

## ຊັບພະຍາກອນ

ທ່ານອາດຕິດຕໍ່ຜູ້ໃຫ້ບໍລິການທີ່ມີໃບອະນຸຍາດຂອງທ່ານໄດ້ຕາມທີ່ລະບຸໄວ້ຂ້າງລຸ່ມ:

ຊື່ຜູ້ມີໃບອະນຸຍາດ:____________________________

ໂທລະສັບ:____________________________

ອີເມວ:____________________________

ທີ່ຢູ່:____________________________

ຊື່ ແລະ ຕໍາແໜ່ງຂອງບຸກຄົນທີ່ອາດຈະສົ່ງບັນຫາ ຫຼື ຄໍາຮ້ອງຮຽນໄປຫາ:________________

____________________________________

**ລາຍງານການທາລຸນ, ການປ່ອຍປະລະເລີຍ ຫຼື ການສະແຫວງຫາຜົນປະໂຫຍດທາງການເງິນຈາກຜູ້ໃຫຍ່ທີ່ອ່ອນແອທີ່ມີການສົງໄສ:**

ສູນລາຍງານການທາລຸນຜູ້ໃຫຍ່ MINNESOTA (MAARC) ໂທ
ລະສັບ: 1-844-880-1574
ສໍາລັບຂໍ້ມູນເພີ່ມເຕີມ:
[Vulnerable adult protection and elder abuse (https://mn.gov/dhs/adult-protection/)](https://mn.gov/dhs/adult-protection/)

**ສໍາລັບການຮ້ອງຮຽນອື່ນໆທັງໝົດ** ທີ່ບໍ່ແມ່ນການທາລຸນ, ການປ່ອຍປະລະເລີຍ ຫຼື ການສະແຫວງຫາຜົນປະໂຫຍດທາງການເງິນຈາກຜູ້ໃຫຍ່ທີ່ອ່ອນແອທີ່ມີການສົງໄສ, ກະລຸນາຕິດຕໍ່ຫ້ອງການຮ້ອງຮຽນສະຖານບໍລິການສຸຂະພາບ ຢູ່ທີ່ພະແນກສາທາລະນະສຸກ Minnesota:

MINNESOTA DEPARTMENT OF HEALTH OFFICE OF
HEALTH FACILITY COMPLAINTS PO Box 64970
St. Paul, Minnesota 55164-0970
ໂທລະສັບ: 651-201-4201 ຫຼື 1-800-369-7994
ແຟັກ: 651-281-9796
health.ohfc-complaints@state.mn.us Office of Health Facility Complaints
(https://www.health.state.mn.us/facilities/regulation/ohfc/index.html)

**ເພື່ອຮ້ອງຂໍການບໍລິການສະໜັບສະໜູນ**, ກະລຸນາຕິດຕໍ່ຫ້ອງການເຈົ້າໜ້າທີ່ສືບສວນຄໍາຮ້ອງຟ້ອງສໍາລັບການດູແລເບິ່ງແຍງໄລຍະຍາວ ຫຼື ຫ້ອງການເຈົ້າໜ້າທີ່ສືບສວນຄໍາຮ້ອງຟ້ອງສໍາລັບຄົນພິການທາງດ້ານສຸຂະພາບຈິດ ແລະ ພັດທະນາການ:

OFFICE OF OMBUDSMAN FOR LONG-TERM CARE PO Box 64971
St. Paul, MN 55164-0971
1-800-657-3591 or 651-431-2555
MBA.OOLTC@state.mn.us
Ombudsman for Long-Term Care (http://www.mnaging.org/Advocate/OLTC.aspx)

OFFICE OF OMBUDSMAN FOR MENTAL HEALTH AND DEVELOPMENTAL DISABILITIES
121 7th Place East Metro Square
Building St. Paul, MN 55101-2117
1-800-657-3506 ຫຼື 651-757-1800
Ombudsman.mhdd@state.mn.us
Office of Ombudsman for Mental Health and Developmental
Disabilities (https://mn.gov/omhdd/)

MID-MINNESOTA LEGAL AID/MINNESOTA DISABILITY LAW CENTER
(ລະບົບການປົກປ້ອງ ແລະ ການສະໜັບສະໜູນ)
430 First Avenue North, Suite 300
Minneapolis, MN 55401-1780
1-800-292-4150
mndlc@mylegalaid.org
Legal Aid (http://mylegalaid.org/)

MINNESOTA DEPARTMENT OF HUMAN SERVICES
(ບັນຫາການສໍ້ໂກງ ແລະ ການທາລຸນການຊໍາລະເງິນຂອງ Medicaid)
Surveillance and Integrity Review Services
PO Box 64982
St Paul, MN 55164-0982
1-800-657-3750 ຫຼື 651-431-2650
DHS.SIRS@state.mn.us

SENIOR LINKAGE LINE
(ສູນຊັບພະຍາກອນຜູ້ສູງອາຍຸ ແລະ ຄົນພິການ/ໜ່ວຍງານຜູ້ສູງອາຍຸ)
Minnesota Board on Aging
PO Box 64976
St. Paul, MN 55155
1-800-333-2433
senior.linkage@state.mn.us
Senior LinkAge Line (www.SeniorLinkageLine.com)

**ສໍາລັບການສອບຖາມຂໍ້ມູນທົ່ວໄປ, ກະລຸນາຕິດຕໍ່:**

Minnesota Department of Health Health Regulation Division
85 E. 7th Place PO Box 64970
St. Paul, MN 55164-0970
651-201-4101
health.fpc-web@health.state.mn.us
Minnesota Department of Health (www.health.state.mn.us)

ເພື່ອໃຫ້ຜູ້ໃຫ້ບໍລິການດູແລເບິ່ງແຍງຢູ່ເຮືອນທີ່ມີໃບອະນຸຍາດເທົ່ານັ້ນນໍາໃຊ້ຕາມກົດໝາຍ Minnesota, ມາດຕາ 144Aa.44 ໝວດຍ່ອຍທີ 1. ສິດທິເຫຼົ່ານີ້ກ່ຽວກັບລູກຄ້າທີ່ໄດ້ຮັບການບໍລິການດູແລເບິ່ງແຍງຢູ່ເຮືອນຈາກຜູ້ໃຫ້ບໍລິການດູແລເບິ່ງແຍງຢູ່ເຮືອນທີ່ມີໃບອະນຸຍາດເທົ່ານັ້ນ.

ຜູ້ໃຫ້ບໍລິການດູແລເບິ່ງແຍງຢູ່ເຮືອນຈະຕ້ອງໃຫ້ແຈ້ງການເປັນລາຍລັກອັກສອນກ່ຽວກັບສິດທິແກ່ລູກຄ້າ ຫຼື ຜູ້ຕາງໜ້າຂອງລູກຄ້າກ່ອນວັນທີທີ່ຈະໃຫ້ການບໍລິການຄັ້ງທໍາອິດແກ່ລູກຄ້າ. ຜູ້ໃຫ້ບໍລິການຈະຕ້ອງໃຊ້ຄວາມພະຍາຍາມທັງໝົດພໍສົມຄວນໃນການໃຫ້ແຈ້ງການກ່ຽວກັບສິດທິແກ່ລູກຄ້າ ຫຼື ຜູ້ຕາງໜ້າຂອງລູກຄ້າໃນພາສາທີ່ລູກຄ້າ ຫຼື ຜູ້ຕາງໜ້າຂອງລູກຄ້າສາມາດເຂົ້າໃຈ.

Minnesota Department of Health
Health Regulation Division
P.O. Box 64900
St. Paul, Minnesota 55164-0900
651-201-4101
health.fpc-licensing@state.mn.us

ແກ້ໄຂເມື່ອເດືອນພະຈິກ 2019

*ເພື່ອຮັບຂໍ້ມູນນີ້ໃນຮູບແບບອື່ນ, ໂທ: 651-201-4101.*